# ALIREGFENIB

**Generic name:** Regorafenib
**Brand Name:** ALIREGFENIB
**Composition:**
Regorafenib............................................................40mg
**Indications:**

- Metastatic colorectal cancer (CRC) that has been previously treated.
- Locally advanced, unresectable or metastatic gastrointestinal stromal tumor (GIST) that has been previously treated.
- Hepatocellular carcinoma (HCC) that has been treated with sorafenib.

**Dosage:**

- The recommended dose is 160 mg ALIREGFENIB (four 40 mg tablets) taken orally once daily for the first 21 days of each 28-day cycle. Continue treatment until disease progression or unacceptable toxicity.
- Take ALIREGFENIB at the same time each day. Swallow the whole tablet with water after a low-fat meal that contains less than 600 calories and less than 30% fat. Do not take two doses of ALIREGFENIB on the same day to make up for a missed dose from the previous day.

**Contraindications:**

- Patients with hypersensitivity reactions to regorafenib or any the excipients.

**Warning:**

- Hepatic impairment, monitor liver function closely.
- Interruption of Regorafenib treatment should be considered in cases of worsening infection.
- It is recommended to discontinue patients with gastrointestinal perforation or fistula.
- Patients with a history of ischemic heart disease should be monitored for the clinical signs and symptoms of myocardial ischemia.
- Hypertension: Temporarily or permanently withhold ALIREGFENIB for severe or uncontrolled hypertension.
- Women and of childbearing age must be informed that ALIREGFENIB may harm the fetus and should ensure effective contraception during and up to 8 weeks after treatment.

**Adverse Effects:**

- The most commonly reported adverse reactions include pain, hand-foot skin reaction, fatigue/weakness, diarrhea, decreased appetite, hypertension, and infections.

**Dosage form:** Light pink oval tablets.
**Packaging:** 28 tablets/bottle.
**Expiry date:** 36 months from the date of manufacture.
**Storage:**

- Stored in original packaging below 25℃.
- Keep out of reach of children.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# ALIREGFENIB

**ຊື່ທົ່ວໄປ:** Regorafenib

**ຊື່ການຄ້າ:** ALIREGFENIB

**ສ່ວນປະກອບ:**

Regorafenib............................................................40mg

**ຂໍ້ບົ່ງໃຊ້:**

- ມະເຮັງລຳໄສ້ໃຫຍ່ ແລະ ທະວານໜັກ ທີ່ມີການແຜ່ລາມ (CRC) ທີ່ໄດ້ຜ່ານການພິຈາລະນາໃນການປິ່ນປົວແລ້ວ.
- ມະເຮັງເຍື່ອເມືອກທີ່ກ່ຽວກັບລະບົບທາງເດີນອາຫານ (GIST) ທີ່ແຜ່ລາມໃນບໍລິເວນທີ່ບໍ່ສາມາດທຳການຜ່າຕັດໄດ້ ຫຼື ແຜ່ລາມໃນໄລຍະເວລາທີ່ໄດ້ຮັບການປິ່ນປົວ.
- ມະເຮັງຈຸລັງຕັບ (HCC) ທີ່ເຄີຍໄດ້ຮັບການປິ່ນປົວດ້ວຍຢາ sorafenib.

**ວິທີໃຊ້:**

- ປະລິມານທີ່ແນະນຳ ALIREGFENIB ໃຫ້ໃຊ້ດ້ວຍປະລິມານ 160 mg (ຢາຂະໜາດ 40mg ຈຳນວນ 04 ເມັດ) ກິນວັນລະຄັ້ງ ກຳນົດເວລາ 21 ວັນທຳອິດ ຂອງຮອບການປິ່ນປົວ 28 ວັນ, ສືບຕໍ່ການປິ່ນປົວ ຈົນເຖິງໄລຍະທີ່ມີການແຜ່ລາມຂອງພະຍາດ ຫຼື ໃນກໍລະນີທີ່ເກີດພິດເບື່ອ ທີ່ບໍ່ສາມາດຍອມຮັບໄດ້.
- ໃຫ້ກິນຢາ ALIREGFENIB ໃນເວລາດຽວກັນຂອງແຕ່ລະວັນ.ໃຫ້ກືນຢາເປັນເມັດພ້ອມກັບນ້ຳ ຫຼັງອາຫານທີ່ມີໄຂມັນຕ່ຳ ທີ່ມີພະລັງງານໜ້ອຍກວ່າ 600 ແຄລໍລີ (Calories), ແລະ ມີໄຂມັນບໍ່ເກີນກວ່າ 30 %. ຫ້າມກິນຢາ ALIREGFENIB ສອງຄັ້ງ ໃນມື້ດຽວກັນ ເພື່ອທົດແທນໃນກໍລະນີລືມກິນຢາ ໃນມື້ຜ່ານມາ.

**ຂໍ້ຫ້າມໃຊ້:**

- ຄົນເຈັບທີ່ມີອາການແພ້ຕໍ່ຢານີ້ ຫຼື ແພ້ສ່ວນປະກອບອື່ນໆໃນຕົວຢາ.

**ຄຳເຕືອນ:**

- ໜ້າທີ່ການທຳງານຂອງຕັບຊຸດໂຊມ: ຄວນຕິດຕາມ ປະເມີນໜ້າທີ່ການທຳງານຂອງຕັບຢ່າງໃກ້ຊິດ.
- ຄວນພິຈາລະນາຢຸດການນຳໃຊ້ຢາ ໃນກໍລະນີທີ່ພົບວ່າມີການຕິດເຊື້ອຮ້າຍແຮງຂຶ້ນ.
- ແນະນຳໃຫ້ຢຸດການນຳໃຊ້ຢາ ໃນຄົນເຈັບທີ່ມີລຳໄສ້ຊອດ ຫຼື ມີຮ່ອງຮອຍຂອງການຮົ່ວ ໃນທາງເດີນອາຫານ.
- ຄົນເຈັບທີ່ມີປະຫວັດພະຍາດຫົວໃຈຂາດເລືອດ ຄວນໄດ້ຮັບການຕິດຕາມອາການທາງດ້ານຄຣີນິກ ແລະ ອາການຂອງກ້າມຊີ້ນຫົວໃຈຂາດເລືອດ.
- ຄວາມດັນເລືອດສູງ: ໃນກໍລະນີຄົນເຈັບທີ່ມີຄວາມດັນເລືອດສູງຮຸນແຮງ ຫຼື ບໍ່ສາມາດຄວບຄຸມຄວາມດັນໄດ້ ຄວນຢຸດການໃຊ້ຢາຊົ່ວຄາວ ຫຼື ຖາວອນ.
- ແມ່ຍິງໃນໄວຈະເລີນພັນຕ້ອງຮູ້ຈັກວ່າ ຢາ ALIREGFENIB ອາດເປັນອັນຕະລາຍຕໍ່ເດັກໃນທ້ອງ, ຄວນມີການຄຸມກຳເນີດຢ່າງມີປະສິດທິພາບ ໃນລະຫວ່າງການປິ່ນປົວ ແລະ ຫຼັງຈາກການປິ່ນປົວ ບໍ່ເກີນ 8 ອາທິດ.

**ຜົນຂ້າງຄຽງ:**

- ຜົນຂ້າງຄຽງທີ່ພົບສ່ວນໃຫຍ່ໄດ້ແກ່: ການເຈັບປວດ, ອາການແພ້ຢູ່ບໍລິເວນມື ແລະ ຕີນ, ອ່ອນແຮງ, ອິດເມື່ອຍ, ຖອກທ້ອງ, ເບື່ອອາຫານ, ຄວາມດັນເລືອດສູງ ແລະ ມີການຕິດເຊື້ອ.

**ຮູບແບບຂອງຢາ:** ຢາເມັດມົນສີບົວອ່ອນ.

**ຂະໜາດບັນຈຸ:** ບັນຈຸໃນກ່ອງ, 1 ກ່ອງມີ 28 ເມັດ.

**ວັນໝົດອາຍຸ:** 36 ເດືອນ ຫຼັງຈາກວັນທີຜະລິດ.

**ການເກັບຮັກສາ:**

- ເກັບຮັກສາໄວ້ໃນກ່ອງບັນຈຸເດີມ, ປິດຝາສະໜິດ, ເກັບຮັກສາໄວ້ໃນອຸນຫະພູມຕ່ຳກວ່າ 25 °C.
- ເກັບຮັກສາໄວ້ໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**

ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ

ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ: +856-21-737 051

www.alliancepharmagroup.com